## ມິຊຊາອາທິດທີ 29 ກຳນົດທຳມະດາ ປີ B
## ວັນທີ 17 ຕຸລາ 2021



**ພຣະວໍລະສານໂດຍນັກບຸນມັກໂກ ມກ 10, 35-45**

ໃນເວລານັ້ນ, ຢາໂກເບແລະຢວງບຸດຂອງເຊເບເດເຂົ້າມາຫາພຣະເຢຊູເຈົ້າທູນວ່າ: "ພຣະອາຈານ, ໂຜດປະທານຕາມທີ່ພວກຂ້ານ້ອຍທັງສອງຈະຂໍ." ພຣະເຢຊູເຈົ້າກ່າວວ່າ:"ພວກເຈົ້າຕ້ອງການໃຫ້ເຮົາທານສິ່ງໃດແກ່ພວກເຈົ້າ?" ທັງສອງທູນຕອບວ່າ: "ຂໍທານໃຫ້ພວກຂ້ານ້ອຍທັງສອງໄດ້ນັ່ງຂ້າງພຣະອົງ. ຜູ້ໜຶ່ງຢູ່ເບື້ອງຂວາແລະຜູ້ໜຶ່ງຢູ່ເບື້ອງຊ້າຍໃນສີມຸງຄຸນຂອງພຣະອົງ". ພຣະເຢຊູເຈົ້າກ່າວວ່າ: "ພວກເຈົ້າບໍ່ຮູ້ວ່າພວກເຈົ້າຂໍຫຍັງຊ້ຳ. ພວກເຈົ້າດື່ມຈອກທີ່ເຮົາຕ້ອງດື່ມ. ແລະຮັບສິນລ້າງທີ່ເຮົາຕ້ອງຮັບນັ້ນໄດ້ບໍ?" ທັງສອງທູນວ່າ: "ພວກຂ້ານ້ອຍຮັບໄດ້". ພຣະເຢຊູເຈົ້າກ່າວວ່າ: "ຈອກທີ່ເຮົາຈະດື່ມນັ້ນ, ພວກເຈົ້າກໍຈະດື່ມ; ແລະສິນລ້າງທີ່ເຮົາຈະຮັບນັ້ນ ພວກເຈົ້າກໍຈະຮັບດ້ວຍ; ແຕ່ເລື້ອງນັ່ງຢູ່ເບື້ອງຊ້າຍຫລືເບື້ອງຂວາຂອງເຮົານັ້ນ, ບໍ່ແມ່ນໜ້າທີ່ຂອງເຮົາຈະປະທານໃຫ້; ແມ່ນສຳລັບພວກທີ່ເພິ່ນໄດ້ກຳນົດໄວ້ແລ້ວເທົ່ານັ້ນ". ພວກສາວົກອີກສິບຄົນໄດ້ຍິນກໍຢາກຮ້າຍຢາໂກເບແລະຢວງ.

ພຣະເຢຊູເຈົ້າຈຶ່ງຮຽກສາວົກທັງໝົດມາກ່າວວ່າ: "ພວກເຈົ້າຮູ້ວ່າໃນໝູ່ນານາຊາດ, ຜູ້ໃດທີ່ເຂົາຖືວ່າເປັນນາຍກໍໃຊ້ອຳນາດບັງຄັບບັນຊາ. ແລະຜູ້ທີ່ເປັນໃຫຍ່ກໍມັກສຳແດງອຳນາດຂອງຕົນອອກມາ. ສຳລັບພວກເຈົ້າບໍ່ຕ້ອງເປັນດັ່ງນີ້, ຜູ້ໃດຢາກເປັນໃຫຍ່ໃນພວກເຈົ້າໃຫ້ທຳຕົນເປັນຄົນໃຊ້. ແລະຜູ້ໃດຢາກເປັນທີໜຶ່ງໃນພວກເຈົ້າ, ກໍໃຫ້ທຳຕົນເປັນຂ້ອຍໃຊ້ຂອງຜູ້ອື່ນທັງໝົດ. ຍ້ອນວ່າ, ບຸດມະນຸດບໍ່ໄດ້ສະເດັດມາໃນໂລກນີ້ເພື່ອໃຫ້ຜູ້ອື່ນຮັບໃຊ້, ແຕ່ເພື່ອຮັບໃຊ້ແລະມອບຊີວິດຂອງຕົນເປັນການກູ້ໄຖ່ເອົາຄົນເປັນຈຳນວນມາກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ສິ່ງທີ່ຢວງ ແລະຢາໂກເບວອນຂໍນຳພຣະເຢຊູເຈົ້າວັນນີ້ສະທ້ອນໃຫ້ເຫັນເຖິງຄວາມນຶກຄິດແລະຄວາມຫວາດຝັນທີ່ເຂົາທັງສອງມີຕໍ່ພຣະເຢຊູເຈົ້າ. ສຳລັບພວກເຂົາພຣະເຢຊູເຈົ້າອາດສາມາດຕອບສະໜອງຄວາມຕ້ອງການຂອງພວກເຂົາໃນຊີວິດນີ້ແລະໃນສັງຄົມ. ສຳລັບພວກເຂົາພຣະເຢຊູເຈົ້າເປັນຄົນທີ່ມີອຳນາດສາມາດຜາບແພ້ທຸກຄົນແລະທຸກຄົນຕ້ອງສະວາມີພັກຕໍ່ພຣະອົງ. ແລະພວກເຂົາຜູ້ເປັນສິດຂອງພຣະອົງກໍຈະໄດ້ນັ່ງຢູ່ຂ້າງຊ້າຍແລະຂ້າງຂວາຂອງພຣະອົງບົນພຣະລາຊາບັນລັງ. ແຕ່ຄວາມຄິດຂອງຢວງແລະຢາໂກເບບໍ່ແມ່ນຄວາມຄິດຂອງພຣະເຢຊູເຈົ້າ. ເພາະການທີ່ພຣະອົງມາໃນໂລກນີ້ບໍ່ແມ່ນເພື່ອເປັນນາຍ, ແຕ່ເພື່ອເປັນຜູ້ຮັບໃຊ້. ພຣະອົງບໍ່ໄດ້ມາເພື່ອໃຫ້ຄົນອື່ນຮັບໃຊ້ພຣະອົງ, ແຕ່ເພື່ອຮັບໃຊ້ຄົນອື່ນ. ພຣະອົງມາເພື່ອສະລະຊີວິດຂອງພຣະອົງເປັນຄ່າໄຖ່ບາບແທນພວກເຮົາ. ພຣະອົງມາເພື່ອໃຫ້ທຸກຄົນທີ່ເຫັນແລະເຊື່ອໃນພຣະອົງໄດ້ຮອດຊີວິດ. ດ້ວຍເຫດນີ້, ຜູ້ທີ່ເປັນສິດຂອງພຣະເຢຊູເຈົ້າຕ້ອງໄດ້ປະຕິບັດຕາມສິ່ງທີ່ພຣະອົງໄດ້ປະຕິບັດ ຄືຕ້ອງເປັນຜູ້ຮັບໃຊ້ຄົນອື່ນດ້ວຍຄວາມຮັກ. ກົງກັນຂ້າມ, ຜູ້ທີ່ມັກໃຫຍ່ໄຟ່ສູງ,ຜູ້ທີ່ມັກໃຊ້ອຳນາດເພື່ອບັງຄັບຄົນອື່ນແລະມັກໃຫ້ຄົນອື່ນມາຮັບໃຊ້ຕົນນັ້ນ, ຜູ້ນັ້ນບໍ່ແມ່ນສິດຂອງພຣະເຢຊູເຈົ້າ. ແລະເຂົາກໍບໍ່ມີສ່ວນໃນອານາຈັກສະຫວັນຂອງພຣະອົງດ້ວຍ.

ຄຳວອນຂໍຂອງຢວງແລະຢາໂກເບວັນນີ້ກໍອາດເປັນຄຳວອນຂໍຂອງພວກເຮົາເຊັ່ນດຽວກັນ. ແລະຄວາມຄິດແບບເພີ້ຝັນຂອງຢວງແລະຢາໂກເບວັນນີ້ກໍອາດເປັນຄວາມຄິດຂອງພວກເຮົາເຊັ່ນດຽວກັນ. ເພາະພວກເຮົາຢາກໃຫ້ພຣະເຢຊູເຈົ້າຕອບສະໜອງຕາມຄຳຮ້ອງຂໍແລະຕາມຄວາມຕ້ອງການຂອງພວກເຮົາແຕ່ລະຄົນ. ແຕ່ພວກເຮົາບໍ່ເຂົ້າໃຈແລະບໍ່ຮຽນຮູ້ສິ່ງທີ່ພຣະອົງສອນແລະປະຕິບັດ. ພວກເຮົາຄິດຫາແຕ່ສິ່ງທີ່ເປັນຂອງໂລກຫລາຍກວ່າສິ່ງທີ່ເປັນຂອງສະຫວັນ. ດ້ວຍເຫດນີ້ຄຳວອນຂໍຂອງພວກເຮົາຈຶ່ງບໍ່ຖືກຕ້ອງຕາມນ້ຳພຣະໄທຂອງພຣະເຈົ້າ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ເຂົ້າໃຈເຖິງພາລະກິດແລະຄຳສອນຂອງພຣະອົງທີ່ມີຕໍ່ລູກແລະຕໍ່ທຸກຄົນ. ເພາະການທີ່ພຣະອົງມາໃນໂລກນີ້ແມ່ນເພື່ອຮັບໃຊ້ລູກແລະມອບຊີວິດຂອງພຣະອົງເປັນຄ່າໄຖ່ບາບລູກ. ເພື່ອລູກຈະໄດ້ຫລຸດພົ້ນຈາກບາບແລະກັບມາເປັນລູກຂອງພຣະບິດາເຈົ້າອີກຄັ້ງໜຶ່ງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ